ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ສານປະກາດການໃຫ້ສັດຕະຍາບັນ

---

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ 2015), ມາດຕາ 67, ຂໍ້14;
- ອີງຕາມ ກົດໝາຍ ວ່າດ້ວຍ ສົນທິສັນຍາ ແລະ ສັນຍາສາກົນ, ເລກທີ 18/ສພຊ, ລົງວັນທີ 08 ພຶດສະພາ 2017, ມາດຕາ 44;
- ອີງຕາມ ມະຕິຂອງຄະນະປະຈຳສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເລກທີ 151/ຄປຈ, ລົງວັນທີ 05 ທັນວາ 2018 ວ່າດ້ວຍ ການໃຫ້ສັດຕະຍາບັນແກ່ ອະນຸສັນຍາກຽວໂຕ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ ສະບັບປັບປຸງ (Doha Amendment to the Kyoto Protocol).

**ປະທານປະເທດ**

**ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະກາດ:**

ມາດຕາ 1 ປະກາດໃຫ້ສັດຕະຍາບັນແກ່ ອະນຸສັນຍາກຽວໂຕ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ ສະບັບປັບປຸງ (Doha Amendment to the Kyoto Protocol) ທີ່ ຖືກຮັບຮອງ ໃນວັນທີ 08 ທັນວາ 2012 ທີ່ ໂດຮາ, ປະເທດກາຕາ.

ມາດຕາ 2 ບັນດາບົດບັນຍັດ ທີ່ໄດ້ກຳນົດໃນອະນຸສັນຍາສະບັບປັບປຸງນີ້ ຕ້ອງໄດ້ຮັບການຈັດຕັ້ງປະຕິບັດ ຢ່າງເຕັມສ່ວນ ຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ມາດຕາ 3 ສານປະກາດການໃຫ້ສັດຕະຍາບັນສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫຼວງວຽງຈັນ, ວັນທີ 30 ມັງກອນ 2019

ປະທານປະເທດ ແຫ່ງ ສປປ ລາວ

ເຊັນຮັບປະຕິບັດ

ສະເຫຼີມໄຊ ກົມມະສິດ

ລັດຖະມົນຕີກະຊວງການຕ່າງປະເທດ

ບຸນຍັງ ວໍລະຈິດ